ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0254 /ກງ

ນະຄອນຫຼວງວຽງຈັນ, ວັນທີ 26 ມັງກອນ 2023

# ໜັງສືແຈ້ງການ

ຮຽນ: - ທ່ານ ບັນດາລັດຖະມົນຕີກະຊວງ, ຫົວໜ້າອົງການທຽບເທົ່າຂັ້ນສູນກາງ ທີ່ນັບຖື;

- ທ່ານ ເຈົ້າຄອງນະຄອນຫຼວງ, ບັນດາເຈົ້າແຂວງ ໃນຂອບເຂດທົ່ວປະເທດ;
- ບັນດາ ທ່ານ ເຈົ້ານະຄອນ, ເຈົ້າເມືອງ, ເທດສະບານ;
- ບັນດາ ວິສາຫະກິດຂອງລັດ ໃນຂອບເຂດທົ່ວປະເທດ.

ເລື່ອງ: ແຈ້ງການນຳໃຊ້ເອກະສານຄູ່ມືກ່ຽວກັບກົນໄກການຮ້ອງທຸກວຽກງານຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ.

- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ສະບັບເລກທີ 18/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ຂໍ້ຕົກລົງຂອງທ່ານລັດຖະມົນຕີ ກະຊວງການເງິນ ວ່າດ້ວຍການຮັບຮອງເອກະສານຄູ່ມືກ່ຽວກັບກົນໄກການຮ້ອງທຸກວຽກງານຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 3780/ກງ, ລົງວັນທີ 30 ພະຈິກ 2022;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງຊັບສິນແຫ່ງລັດ ສະບັບເລກທີ 4485/ຄຊລ, ລົງວັນທີ 26 ທັນວາ 2022.

ກະຊວງການເງິນ ໃນນາມເປັນເຈົ້າການສ້າງ ແລະ ປັບປຸງນິຕິກຳທີ່ຕິດພັນກັບວຽກງານການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ບົນພື້ນຖານການຜັນຂະຫຍາຍ (ມາດຕາ 46 ການຮ້ອງທຸກ) ຂອງກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ເພື່ອຜັນຂະຫຍາຍການຈັດຕັ້ງປະຕິບັດກົນໄກການແກ້ຄຳສະເໜີຮ້ອງທຸກໃຫ້ມີປະສິດທິພາບຫຼາຍຂຶ້ນ ແລະ ທັນຕາມກຳນົດເວລາ. ຊຶ່ງປະຈຸບັນກະຊວງການເງິນ ໄດ້ສຳເລັດການສ້າງເອກະສານຄູ່ມື ແລະ ແບບຟອມຕ່າງໆ ເພື່ອຮັບໃຊ້ວຽກງານແກ້ໄຂການຮ້ອງທຸກວຽກງານຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ໃນນັ້ນໄດ້ກຳນົດຂັ້ນຕອນລະອຽດກ່ຽວກັບການສະເໜີຂອງຜູ້ຮ້ອງທຸກ ແລະ ໜ້າທີ່ຂອງຄະນະສະເພາະກິດຊຶ່ງແມ່ນບັນດາທ່ານຕາງໜ້າຈາກບັນດາກະຊວງ/ອົງການອ້ອມຂ້າງສູນກາງ; ພ້ອມດຽວກັນນັ້ນ, ກອງເລຂາແມ່ນກົມຄຸ້ມຄອງຊັບສິນແຫ່ງລັດ ແລະ ທັງເປັນຫົວໜ້າຄະນະ ເພື່ອແກ້ໄຂການຮ້ອງທຸກວຽກງານຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ; ແນໃສ່ຮັບປະກັນວ່າກົນໄກແກ້ໄຂຄຳສະເໜີຮ້ອງທຸກໃນຂົງເຂດວຽກງານການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ໄດ້ດຳເນີນໄປຕາມຂັ້ນຕອນຢ່າງຖືກຕ້ອງ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

ດັ່ງນັ້ນ, ຈຶ່ງອອກແຈ້ງການມາຍັງບັນດາທ່ານເພື່ອຊາບ ແລະ ໃຫ້ການຮ່ວມມືຕາມແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີກະຊວງການເງິນ

ບຸນໂຈມ ອຸບົນປະເສີດ